ບົດຮຽນທີ 4 - ພຣະວິນຍານບໍລິສຸດ

ພະລັງ ຫລື ບຸກຄົນໃດໜຶ່ງ?
ບຸກຄົນທີສາມຂອງພຣະເຈົ້າຄື ພຣະວິນຍານບໍລິສຸດ. ເຖິງຢ່າງໃດກໍ່ຕາມ, ມີບາງສາສະໜາສອນວ່າພຣະວິນຍານບໍລິສຸດແມ່ນພຣະລັງອຳນາດ ຫລືອິດທິພົນຫຼາຍກວ່າບຸກຄົນທີ່ມີຊີວິດຢູ່. ຈົ່ງສຶກສາພິສູດຫຼັກຖານດັ່ງຕໍ່ໄປນີ້ຢ່າງລະມັດລະວັງວ່າ ພຣະວິນຍານບໍລິສຸດແມ່ນບຸກຄົນ (ບໍ່ພຽງແຕ່ລິດອຳນາດ ຫລື ພະລັງເທົ່ານັ້ນ) ແລະ ເປັນພຣະເຈົ້າ:

ຄຳແທນນາມທີ່ຖືກໃຊ້ສຳລັບພຣະວິນຍານບໍລິສຸດ
ໂຢຮັນ 14:26 ແລະ ໂຢຮັນ 16:13 ແມ່ນຄຳວ່າ "ພຣະອົງ"

ພຣະວິນຍານບໍລິສຸດເອີ້ນວ່າ "ຜູ້ເລົ້າໂລມ"
"ແຕ່ພຣະຜູ້ເລົ້າໂລມຄືພຣະວິນຍານບໍຣິສຸດເຈົ້າ ... " (ໂຢຮັນ 14:26). ເບິ່ງອີກໃນ ໂຢຮັນ 14:16 ແລະ ໂຢຮັນ15:26.
ພະລັງບໍ່ສາມາດເລົ້າໂລມ, ມີພຽງແຕ່ບຸກຄົນເທົ່ານັ້ນທີ່ສາມາດເຮັດສິ່ງນີ້ໄດ້.

ພຣະວິນຍານບໍລິສຸດຊົງມີຄວາມຮູ້
ໃນ 1 ໂກລິນໂທ 2:11 ແລະ ຂໍ້ອື່ນໆ, ພວກເຮົາພົບວ່າ ພຣະວິນຍານບໍລິສຸດຊົງຮອບຮູ້ “ທຸກສິ່ງກ່ຽວກັບພຣະເຈົ້າ” ພະລັງບໍ່ສາມາດຮູ້ຈັກທຸກຢ່າງໄດ້.

ພຣະວິນຍານເຮັດສິ່ງທີມະນຸດຄົນໜຶ່ງສາມາດເຮັດໄດ້
ພຣະວິນຍານບໍລິສຸດສັ່ງສອນ (ໂຢຮັນ 14:26), ຕິຕຽນ (ໂຢຮັນ 16: 8), ນຳພາ (ໂຢຮັນ 16:13), ກ່າວ (ກິດຈະການ 13: 2), ແລະ ອ້ອນວອນ (ໂຣມ 8:26).

ພຣະວິນຍານບໍລິສຸດມີລັກສະນະຂອງຄວາມເປັນບຸກຄົນ
ພຣະອົງຖືກຕົວະ (ກິດຈະການ 5: 3), ເສຍພຣະໄທ (ເອເຟໂຊ 4: 30), ແລະ ດູໝິ່ນ (ມັດທາຍ 12:31).

ພຣະອົງຊົງເປັນນິລັນດອນ
“ຫລາຍກວ່ານັ້ນຈັກພຽງໃດ ພຣະໂລຫິດຂອງພຣະຄຣິດ ຜູ້ໄດ້ຊົງຖວາຍພຣະອົງເອງແດ່ພຣະເຈົ້າ. . . ” (ເຮັບເຣີ 9:14).

ພຣະອົງຊົງຮອບຮູ້ (ຮູ້ທຸກຢ່າງ)
ພຣະວິນຍານບໍລິສຸດຊົງຮູ້  "ຄວາມເລິກລັບຂອງພຣະເຈົ້າ" (1 ໂກຣິນໂທ 2: 10-1111). ພຣະເຢຊູຄຣິດ
ໄດ້ບອກພວກລູກສິດຂອງພຣະອົງວ່າ ພຣະວິນຍານບໍລິສຸດ "ຈະສັ່ງສອນພວກເຈົ້າທຸກສິ່ງ" (ໂຢຮັນ 14:26).

ພຣະອົງຊົງເປັນຜູ້ມີອຳນາດສູງສຸດ (ມີອຳນາດບໍ່ຈຳກັດ)
ພຣະວິນຍານບໍລິສຸດມີ “ອຳນາດຂອງຜູ້ສູງສຸດ” ອີງຕາມລູກາ 1:35.

ພຣະອົງຄືຜູ້ຢູ່ທົ່ວທຸກແຫ່ງຫົນ (ຢູ່ທຸກບ່ອນໃນເວລາດຽວກັນ)
ເພງສັນລະເສີນ 139: 7-10 ສອນວ່າ ບໍ່ວ່າທ່ານຈະໄປສະຫວັນ ຫລືລົງນະລົກ ຫລືບ່ອນເລິກທີ່ສຸດຂອງທະເລ, ພຣະວິນຍານບໍລິສຸດກໍຈະຢູ່ທີ່ນັ້ນ. "ຂ້ານ້ອຍຈະປົບໜີໄປຈາກວິນຍານຂອງພຣະອົງໄປໄດ້ຢ່າງໃດ? ຫຼື ຈະໜີໄປໃສເພື່ອຫຼີກຈາກສາຍຕາຂອງພຣະອົງ?” (ຂໍ້ 7)

ພຣະອົງຊົງຖືກເອີ້ນວ່າພຣະເຈົ້າ
ໃນພຣະທຳ ກິດຈະການ 5: 3 ເປໂຕກ່າວຫາອານາເນຍວ່າ ຕົວະຕໍ່ "ພຣະວິນຍານບໍລິສຸດ" ແລະໃນຂໍ້ທີສີ່ເວົ້າວ່າ ອານາເນຍບໍ່ໄດ້ “ຕົວະມະນຸດ, ແຕ່ຕົວະພຣະເຈົ້າ.” "ບັດນີ້ ອົງພຣະຜູ້ເປັນເຈົ້ານັ້ນຄືພຣະວິນຍານ........." (2 ໂກລິນໂທ 3:17).

ຄຳຖາມທົບທວນບົດຮຽນທີ 4 - ພຣະວິນຍານບໍລິສຸດ

ຖືກ ຫຼື ຜິດ

1. ພຣະພາກທີສາມຂອງພຣະເຈົ້າຄືພຣະວິນຍານບໍລິສຸດ.
2. ຄຳວ່າ "ຜູ້ເລົ້າໂລມ" ພິສູດໃຫ້ເຫັນວ່າ ພຣະວິນຍານບໍລິສຸດເປັນພະລັງ.
3. ພຣະວິນຍານບໍລິສຸດສອນ ແລະ ກ່າວ.
4. ພຣະວິນຍານບໍລິສຸດໄດ້ສະເດັດມາເມື່ອພຣະເຈົ້າສ້າງອາດາມ ແລະ ເອວາ.

ຄຳຖາມແບບປາລະໄນ

5. ຄຳວ່າ " ພຣະອົງຊົງເປັນຜູ້ມີອຳນາດສູງສຸດ " ໝາຍຄວາມວ່າ:
   ກ. ຮູ້ທຸກຢ່າງ
   ຂ. ສາມາດຢູ່ໃນທຸກແຫ່ງຫົນໃນເວລາດຽວກັນ
   ຄ. ບໍ່ເຄີຍປ່ຽນແປງ
   ງ. ມີອຳນາດບໍ່ຈຳກັດ
6. ພຣະວິນຍານບໍລິສຸດຊົງຖືກເອີ້ນວ່າ:
   ກ. ພຣະເຈົ້າ
   ຂ. ພະລັງ
   ຄ. ອຳນາດ
   ງ. ພຣະບຸດຂອງພຣະເຈົ້າ
7. ພຣະຄຳພີກ່າວເຖິງພຣະວິນຍານບໍລິສຸດວ່າ "ພຣະອົງ" ສິ່ງນີ້ພິສູດວ່າ ພຣະວິນຍານບໍລິສຸດແມ່ນ:
   ກ. ອິດທິພົນ
   ຂ. ມະນຸດ
   ຄ. ບຸກຄົນ
   ງ. ພຣະເຈົ້າ

ຕື່ມໃສ່ຊ່ອງຫວ່າງ

8. "ບໍ່ມີມະນຸດຜູ້ໃດຮູ້ຈັກພຣະເຈົ້າ, ແຕ່ແມ່ນ________________ພຣະເຈົ້າເທົ່ານັ້ນ" (1 ໂກລິນໂທ 2:11).
9. ອານາເນຍ______________ ຕໍ່ພຣະວິນຍານບໍລິສຸດ.
10. __________________________ ໝາຍຄວາມວ່າ ຮູ້ທຸກຢ່າງ

ການສຶກສາຕໍ່ໄປ

ກິດຈະການ 10:38, ໂລມ 15:13,
ປະຖົມມະການ 1:2, ກິດຈະການ 33: 4,
ເພງສັນລະເສີນ 104:30, ມັດທາຍ 28:19,
2ໂກລິນໂທ 13:14
ໂຢຮັນ 15:26, ໂຢຮັນ 16:14,
1ໂກລິນໂທ 6:11
ລູກາ 3: 21-22, ມັດທາຍ 28:19,
ໂຢຮັນ 14:16